**Skills on court enforcement**
**ທັກສະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 9
## Procedures, methods of suspending, modification, canceling or canceling the enforcement of court judgment
## ຂັ້ນຕອນ, ວິທີການໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັດສິນຂອງສານ

### 1. ຂັ້ນຕອນ

ຂັ້ນຕອນໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານ ຫຼື ພະນັກງານປະຕິບັດຄຳຕັດສິນຂອງສານທີ່ມີສິດອຳນາດຈະຕ້ອງດຳເນີນຕາມຂັ້ນຕອນດັ່ງນີ້: (1).ຮັບຄຳຮ້ອງຂໍ ຫຼື ໜັງສືສະເໜີໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັດສິນຂອງສານ; (2). ພິຈາລະນາ ແລະ ຄົ້ນຄວ້າສາເຫດທີ່ພາໃຫ້ມີການໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດ ຄຳຕັດສິນຂອງສານ;(3). ອອກຄຳສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫຼື ຍົກເລີກການຈັດຕັ້ງປະຕິບັດຄຳຕັດສິນຂອງສານ; (4). ແຈ້ງໃຫ້ຂັ້ນລຸ່ມຂອງຕົນ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ຄູ່ຄວາມຊາບ.

ເມື່ອກະຊວງຍຸຕິທຳ (ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ) ຫຼື ອົງການປະຕິບັດຄຳຕັດສິນຂອງສານໄດ້ຮັບຄຳຮ້ອງກ່ຽວກັບການໂຈະ, ການປ່ຽນແປງ, ການຍົກເລີກ ຫຼື ການລົບລ້າງການຈັດຕັ້ງປະຕິ ບັດຄຳຕັດສິນຂອງສານແລ້ວ ຕ້ອງໄດ້ພິຈາລະນາ ແລະ ຄົ້ນຄວ້າ; ຖ້າເຫັນວ່າມີເຫດຜົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳ (ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ) ຫຼື ອົງການປະຕິບັດຄຳຕັດສິນຂອງສານກໍຕ້ອງອອກຄຳສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫຼື ຍົກເລີກການຈັດຕັ້ງປະຕິບັດຄຳຕັດສິນຂອງສານແລ້ວແຈ້ງໃຫ້ຂັ້ນລຸ່ມຂອງຕົນ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ຄູ່ຄວາມຊາບພາຍໃນກຳນົດເວລາຕາມທີ່ກຳນົດໄວ້ໃນກົດໝາຍ, ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີທີ່ເຫັນວ່າຄຳຮ້ອງນັ້ນ, ບໍ່ມີເຫດຜົນຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຕັ້ງ ປະຕິບັດຄຳຕັດສິນຂອງສານແລ້ວ ກະຊວງຍຸຕິທຳ (ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ) ຫຼື ອົງການປະຕິບັດຄຳຕັດສິນຂອງສານຕ້ອງແຈ້ງໃຫ້ຂັ້ນລຸ່ມຂອງຕົນ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ຄູ່ຄວາມຊາບພາຍໃນກຳນົດເວລາທີ່ກຳນົດໄວ້ໃນກົດໝາຍ ເຊັ່ນດຽວກັນ ແລະ ໃຫ້ສືບຕໍ່ປະຕິບັດຄຳຕັດສິນຂອງສານດັ່ງກ່າວ.

ກ່ຽວກັບການສະເໜີໂດຍ ອົງການໄອຍະການປະຊາຊົນສູງສຸດ ສະເໜີໂຈະ: ກອງປະຊຸມຂອງວິຊາການຂອງອົງການໄອຍະການປະຊາຊົນສູງສຸດ ເຫັນວ່າ ມີຂໍ້ມູນຫຼັກຖານໃໝ່ທີ່ສຳຄັນຕໍ່ການພິຈາລະນາຄະດີ ຊຶ່ງສານຍັງບໍ່ທັນນຳເອົາມາພິຈາລະນາຕັດສິນ ຫຼື ວ່າການພິຈາລະນາຕັດສິນຂອງສານຜ່ານມາຍັງບໍ່ທັນຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ຫຼື ດ້ວຍເຫດຜົນອື່ນໆເຊັ່ນ: ມີການເຂົ້າຂ້າງອອກຂາເພື່ອຜົນປະໂຫຍດກັບຝ່າຍໃດຝ່າຍໜຶ່ງ ຫຼື ດ້ວຍຮູບ

ການອື່ນໆ ຈຶ່ງເຮັດໃຫ້ການພິຈາລະນາຄະດີມີຄວາມຜິດພາດ, ບໍ່ຖືກຕ້ອງກັບຄວາມເປັນຈິງ ແລະ ກົດໝາຍ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງອອກຄຳສະເໜີໂຈະການປະຕິບັດຄຳຕັດສິນຂອງສານແລ້ວສົ່ງໃຫ້ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳຮັບຊາບ. ຈາກນັ້ນ, ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານຈະໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານໄວ້ກ່ອນ ແລະ ຄຳສັ່ງດັ່ງກ່າວນັ້ນ ຕ້ອງໄດ້ແຈ້ງໃຫ້ ອົງການຈັດຕັ້ງປະຕິບັດຄຳຕັກສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານຂັ້ນລຸ່ມຂອງຕົນ, ອົງການໄອຍະການປະຊາຊົນສູງສຸດ ແລະ ຄູ່ຄວາມຊາບພາຍໃນກຳນົດເວລາທີ່ກຳນົດໄວ້ໃນກົດໝາຍ.

"ພາຍຫຼັງ ມີຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານແລ້ວ, ອົງການ ຫຼື ອົງການປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ຢຸດຕິການປະຕິບັດຄຳຕັດສິນຂອງສານໄວ້ຈົນກວ່າຈະມີຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳ ພິພາກສາສະບັບໃໝ່ທີ່ໃຊ້ໄດ້ຢ່າງເດັດຂາດ ແລ້ວຈຶ່ງສືບຕໍ່ຈັດຕັ້ງປະຕິບັດຕາມລະບຽບກົດໝາຍຕໍ່ໄປ"[1].

ອົງການຈັດຕັ້ງຂອງພັກ, ຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ບຸກຄົນນັ້ນ ບໍ່ມີສິດສັ່ງໃຫ້ປ່ຽນແປງ, ໂຈະ,ຍົກເລີກ, ລົບລ້າງ ຫຼື ຂັດຂວາງການປະຕິບັດຄຳຕັດສິນຂອງສານ.

ໃນຂະບວນການໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ພະນັກ ງານຈັດຕັ້ງປະຕິບັກດຄຳຕັດສິນຂອງສານຕ້ອງປະຕິບັດໜ້າທີ່ດ້ວຍຄວາມເອົາໃຈໃສ່ ໃນການປະຕິບັດໜ້າທີ່ວຽກງານໃຫ້ມີຄວາມໂປ່ງໃສ, ຖືກກົດໝາຍ, ຖືກຫຼັກການ ແລະ ມີຈັນຍາບັນທາງດ້ານວິຊາການຂອງຕົນ.

ໃນເວລາໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ກົດໝາຍໄດ້ກຳນົດຂໍ້ຫ້າມສຳລັບພະນັກງານປະຕິບັດຄຳຕັດສິນຂອງສານຄື:

- ຫ້າມກົດໜ່ວງຖ່ວງດຶງ, ເຂົ້າຂ້າງອອກຂາ, ເລືອກຈັດຕັ້ງປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳ ພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;
- ຫ້າມເມີນເສີຍ, ລະເຫຼີງ ແລະ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ;
- ຫ້າມສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ເພື່ອຜົນປະໂຫຍດສ່ວນຕົວ;
- ຫ້າມຮັບສິນບົນ.

**2. ວິທີການ**

ພາຍຫຼັງພະນັກງານປະຕິບັດຄຳຕັດສິນຂອງສານ ເຫັນວ່າມີສາເຫດທີ່ພາໃຫ້ມີການໂຈະການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານຄື: 1/ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເປັນຄົນບ້າເສຍຈິດ ຫຼື ຕົກຢູ່ໃນສະພາບຈຳເປັນ ເຊັ່ນ ເຈັບປ່ວຍໜັກ ໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ; 2/ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ອອກຈາກສະຖານທີ່ຢູ່ອາໄສ ໂດຍບໍ່ຮູ້ບ່ອນຢູ່ທີ່ແນ່ນອນ ຊຶ່ງມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ; 3/ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເສຍຊີວິດ ແຕ່ຜູ້ກ່ຽວຍັງມີຊັບຢູ່; 4/ ຄຳຕັດສິນຂອງສານ ທີ່ບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ລາຍງານຫາຂັ້ນເທິງຂອງຕົນ; 5/ ຄຳຕັດສິນຂອງສານ ບໍ່ຈະແຈ້ງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຊຶ່ງອົງການປະຕິບັດຄຳຕັດ

[1] ປຶ້ມຄູ່ມືການດຳເນີນຄະດີແພ່ງຂັ້ນຕົ້ນ ແລະ ການຮື້ຟື້ນຄະດີ, ໂດຍ: ຄະນະຄົ້ນຄວ້າກົດໝາຍການດຳເນີນຄະດີແພ່ງ, ພາຍໃຕ້ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ (ໜ້າ192), ປີ 2014.

ສິນຂອງສານໄດ້ສະເໜີໃຫ້ສານປະຊາຊົນ ອະທິບາຍ; 6/ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີເງື່ອນໄຂປະຕິບັດ, ບໍ່ມີຄວາມສາມາດຈ່າຍຄ່າທຳນຽມສານ, ຄ່າປັບໃໝ ຫຼື ເງິນຣິບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ 7/ເຈົ້າໜີ້ເຫັນດີໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໂຈະການປະຕິບັດຄຳຕັດສິນຂອງສານ [2].

ເມື່ອມີສາເຫດຕາມທີ່ກ່າວມາຂ້າງເທິງນີ້ ໃຫ້ລາຍງານຕໍ່ຫົວໜ້າກົມ, ກອງ ຫຼື ຫ້ອງປະຕິບັດຄຳຕັດສິນຂອງສານ ທີ່ກ່ຽວຂ້ອງ ເພື່ອພິຈາລະນາອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ.

ໃນກໍລະນີການໂຈະ ຕາມທີ່ໄດ້ກ່າວໄວ້ໃນ ຂໍ້ 1 ແລະ ຂໍ້ 6 ຂ້າງເທິງ ພາຍຫຼັງໄດ້ຮັບຄຳສະເໜີ, ຄຳຮ້ອງແລ້ວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ພິຈາລະນາອອກຄຳສັ່ງໂຈະ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

ເມື່ອກະຊວງຍຸຕິທຳ, ອົງການປະຕິບັດຄຳຕັດສິນຂອງສານ ໄດ້ຮັບຄຳຮ້ອງ, ຄຳສະເໜີ ໃຫ້ມີການປ່ຽນແປງ ແລະ ລົບລ້າງ ການປະຕິບັດຄຳຕັດສິນຂອງສານແລ້ວ ຕ້ອງໄດ້ພິຈາລະນາ ແລະ ຄົ້ນຄວ້າ ພາຍໃນເວລາ ສາມສິບວັນ ຖ້າເຫັນວ່າມີເຫດຜົນ ຫຼື ມີສາເຫດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບປີ 2021 ຄື: 1/ ປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ; 2/ ປະຕິບັດບໍ່ຖືກຕ້ອງຕາມວິທີການ, ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ລະເມີດລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີ ການປະຕິບັດຄຳຕັດສິນຂອງສານ ຫາກຖືກປ່ຽນແປງ ແລະ ລົບລ້າງແລ້ວ ສິ່ງທີ່ໄດ້ປະຕິບັດຕໍ່ກັນນັ້ນຕ້ອງໄດ້ສົ່ງຄືນ, ຟື້ນຟູ, ໃຊ້ແທນ ຫຼື ແກ້ໄຂຄືນ ໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງ ແລ້ວດຳເນີນການປະຕິບັດຄຳຕັດສິນຂອງສານຄືນໃໝ່ ຕາມແຕ່ລະກໍລະນີ.ກໍຕ້ອງອອກຄຳສັ່ງປ່ຽນແປງ ແລະ ລົບລ້າງ ການປະຕິບັດຄຳຕັດສິນຂອງສານ.

ພາຍຫຼັງອອກ ຄຳສັ່ງໂຈະ, ປ່ຽນແປງ ແລະ ລົບລ້າງແລ້ວ ຕ້ອງແຈ້ງໃຫ້ອົງການໄອຍະການປະຊາຊົນ ແລະ ຄູ່ຄວາມ, ສຳລັບ ການປ່ຽນແປງ ແລະ ລົບລ້າງນັ້ນ ຍັງຕ້ອງແຈ້ງໃຫ້ອົງການປະຕິບັດຄຳຕັດສິນຂອງສານຂັ້ນລຸ່ມຂອງຕົນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນອອກຄຳສັ່ງ ເປັນຕົ້ນໄປ.

ໃນກໍລະນີ ການສະເໜີ ຫຼື ການຮ້ອງຂໍ ໂຈະ, ປ່ຽນແປງ ແລະ ລົບລ້າງ ການປະຕິບັດຄຳຕັດສິນຂອງສານນັ້ນ ຫາກບໍ່ມີເຫດຜົນ ກະຊວງຍຸຕິທຳ, ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງໃຫ້ຜູ້ສະເໜີ ຫຼື ຜູ້ຮ້ອງຂໍ ພ້ອມດ້ວຍເຫດຜົນ ແລະ ໃຫ້ສືບຕໍ່ປະຕິບັດຄຳຕັດສິນດັ່ງກ່າວ.

ອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ບຸກຄົນອື່ນ ບໍ່ມີສິດສັ່ງໂຈະ, ປ່ຽນແປງ ແລະ ລົບລ້າງ ການປະຕິບັດຄຳຕັດສິນຂອງສານ.

3. **ການຍົກເລີກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ**

ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ບໍ່ມີຄວາມສາມາດຈ່າຍຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຣິບ ຕາມຄຳຕັດສິນຂອງສານ ຫຼື ໄດ້ປະຕິບັດສ່ວນໃດສ່ວນໜຶ່ງແລ້ວ ແຕ່ບໍ່ສາມາດສືບຕໍ່ປະຕິບັດ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສະເໜີອົງການໄອຍະການປະຊາຊົນຂັ້ນຂອງຕົນ ຕາມເງື່ອນໄຂ ເພື່ອຖະແຫຼງໃຫ້ສານປະຊາຊົນພິຈາລະນາຕັດສິນຍົກເລີກ.

- **ເງື່ອນໄຂການຍົກເລີກ ມີ ດັ່ງນີ້[3]:**

+ ຫ້າປີ ນັບຕັ້ງແຕ່ວັນໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານ ຫຼື ວັນຈ່າຍຄັ້ງສຸດທ້າຍ ເປັນຕົ້ນໄປ

[2] ມາດຕາ 71 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

[3] ມາດຕາ 74 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

ສໍາລັບ ຄ່າທໍານຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ ທີ່ມີມູນຄ່າບໍ່ເກີນ 5.000.000 ກີບ;

+ ສິບປີ ນັບຕັ້ງແຕ່ວັນໄດ້ອອກຄໍາສັ່ງໂຈະການປະຕິບັດຄໍາຕັດສິນຂອງສານ ຫຼື ວັນຈ່າຍຄັ້ງສຸດທ້າຍ ເປັນຕົ້ນໄປ ສໍາລັບ ຄ່າທໍານຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ ທີ່ມີມູນຄ່າຫຼາຍກວ່າ 5.000.000 ກີບ ຫາ 100.000.000 ກີບ;

+ ສິບຫ້າປີ ນັບຕັ້ງແຕ່ວັນໄດ້ອອກຄໍາສັ່ງໂຈະການປະຕິບັດຄໍາຕັດສິນຂອງສານ ຫຼື ວັນຈ່າຍຄັ້ງສຸດທ້າຍ ເປັນຕົ້ນໄປ ສໍາລັບ ຄ່າທໍານຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ ທີ່ມີມູນຄ່າຫຼາຍກວ່າ 100.000.000 ກີບ ຂຶ້ນໄປ.

ໃນກໍລະນີ ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຕ້ອງໄດ້ປະຕິບັດຕາມຄໍາຕັດສິນຂອງສານ ກ່ຽວກັບຄ່າທໍານຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ ຫຼາຍຄໍາຕັດສິນທີ່ຕ່າງກັນນັ້ນ ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຈະຖືກພິຈາລະນາ ຍົກເລີກການປະຕິບັດຄໍາຕັດສິນຂອງສານ ໃນແຕ່ລະຄະດີ.

- **ການສະເໜີຍົກເລີກ**

ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ທີ່ມີເງື່ອນໄຂຍົກເລີກການປະຕິບັດພັນທະ ຕາມທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ, ອົງການປະຕິບັດຄໍາຕັດສິນຂອງສານ ບົນພື້ນຖານຄວາມເປັນເອກະພາບກັບຂະແໜງການການເງິນ ຕ້ອງປະກອບເອກະສານສະເໜີຍົກເລີກ ຕໍ່ອົງການໄອຍະການປະຊາຊົນຂັ້ນຂອງຕົນ ພາຍໃນເວລາ ສາມສິບວັນ ນັບແຕ່ວັນຄົບເງື່ອນໄຂ ເປັນຕົ້ນໄປ.

- **ເອກະສານປະກອບ ສະເໜີຍົກເລີກການປະຕິບັດຄໍາຕັດສິນຂອງສານ ມີ ດັ່ງນີ້:**

+ ໜັງສືສະເໜີ ຂອງອົງການປະຕິບັດຄໍາຕັດສິນຂອງສານ ທີ່ຮັບຜິດຊອບປະຕິບັດຄໍາຕັດສິນຂອງສານ;

+ ຄໍາຕັດສິນຂອງສານ, ຄໍາສັ່ງຕ່າງໆ ຂອງອົງການປະຕິບັດຄໍາຕັດສິນຂອງສານ;

+ ບົດບັນທຶກການປະຕິບັດຄໍາຕັດສິນຂອງສານ, ເອກະສານອື່ນ ທີ່ອ້າງອີງເຖິງເງື່ອນໄຂບໍ່ສາມາດປະຕິບັດຄໍາຕັດສິນຂອງສານ ຊຶ່ງມີໄລຍະເວລາບໍ່ເກີນ ເກົ້າສິບວັນ.

- **ຄໍາຖະແຫຼງຍົກເລີກ**

ພາຍຫຼັງໄດ້ຮັບເອກະສານສະເໜີຍົກເລີກແລ້ວ ອົງການໄອຍະການປະຊາຊົນ ຕ້ອງຄົ້ນຄວ້າ ແລະ ອອກຄໍາຖະແຫຼງພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບໜັງສືສະເໜີ ເປັນຕົ້ນໄປ, ແລ້ວສົ່ງສໍານວນເອກະ ສານໃຫ້ສານປະຊາຊົນເພື່ອພິຈາລະນາຕັດສິນ.

ໃນກໍລະນີ ອົງການໄອຍະການປະຊາຊົນ ບໍ່ເຫັນດີຕໍ່ການສະເໜີຍົກເລີກການປະຕິບັດຄໍາຕັດສິນຂອງສານ ກໍໃຫ້ແຈ້ງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນ ຕໍ່ອົງການປະຕິບັດຄໍາຕັດສິນຂອງສານທີ່ກ່ຽວ ຂ້ອງ ພາຍໃນກໍານົດເວລາທີ່ກ່າວມາຂ້າງເທິງນີ້.

ຖ້າອົງການປະຕິບັດຄໍາຕັດສິນຂອງສານ ຫາກເຫັນວ່າການປະຕິເສດອອກຄໍາຖະແຫຼງ ຂອງອົງ ການໄອຍະການປະຊາຊົນບໍ່ມີເຫດຜົນ ກໍສາມາດສະເໜີຕໍ່ອົງການໄອຍະການປະຊາຊົນຂັ້ນເທິງຖັດໄປ.

- **ການຕັດສິນຍົກເລີກ**

ພາຍຫຼັງໄດ້ຮັບ ຄໍາຖະແຫຼງ ແລະ ສໍານວນເອກະສານ ການຍົກເລີກການປະຕິບັດຄໍາຕັດສິນຂອງສານແລ້ວ ສານປະຊາຊົນ ຕ້ອງພິຈາລະນາຕັດສິນ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບສໍານວນ ເປັນຕົ້ນໄປ.

ຜູ້ເຂົ້າຮ່ວມ ໃນການດໍາເນີນຄະດີ ມີ ດັ່ງນີ້:

+ ຜູ້ຕາງໜ້າຂອງອົງການປະຕິບັດຄໍາຕັດສິນຂອງສານ;

+ ຜູ້ຕາງໜ້າຂອງອົງການໄອຍະການປະຊາຊົນ;

+ ຜູ້ຕາງໜ້າຂອງຂະແໜງການການເງິນ.

ສານປະຊາຊົນ ຕ້ອງສົ່ງຄໍາຕັດສິນ ກ່ຽວກັບການຍົກເລີກການປະຕິບັດຄໍາຕັດສິນຂອງສານ ໃຫ້ອົງການປະຕິບັດຄໍາຕັດສິນຂອງສານ, ອົງການໄອຍະການປະຊາຊົນ, ຂະແໜງການການເງິນ, ຜູ້ຖືກຍົກ ເລີກ ແລະ ການຈັດຕັ້ງບ່ອນຜູ້ກ່ຽວຖືກຄຸມຂັງ-ດັດສ້າງ ຫຼື ສັງກັດຢູ່ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນລົງຄໍາຕັດສິນ ເປັນຕົ້ນໄປ.

ພາຍຫຼັງ ຄໍາຕັດສິນ ກ່ຽວກັບການຍົກເລີກການປະຕິບັດຄໍາຕັດສິນຂອງສານ ມີຜົນບັງຄັບປະຕິ ບັດແລ້ວ ແຕ່ມີຂໍ້ມູນຢັ້ງຢືນວ່າ ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ໄດ້ຊຸກເຊື່ອງ, ເຊື່ອງອໍາ, ມອບ, ໂອນ ຊັບສິນ ເພື່ອຫຼົບຫຼີກການປະຕິບັດໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ສະເໜີຂໍຮື້ຟື້ນຕໍ່ອົງການໄອຍະການປະຊາຊົນສູງສຸດ ເພື່ອພິຈາລະນາ ແລະ ດໍາເນີນຄະດີຕາມກົດໝາຍ.

**References:**

1. ກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
2. ຕໍາລາກໍ່ສ້າງວິຊາຊີບປະຕິບັດຄໍາຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທໍາແຫ່ງຊາດ, ປີ 2020;
3. ປຶ້ມຄູ່ມືການດໍາເນີນຄະດີແພ່ງຂັ້ນຕົ້ນ ແລະ ການຮື້ຟື້ນຄະດີ, ໂດຍ: ຄະນະຄົ້ນຄວ້າກົດໝາຍການດໍາເນີນຄະດີແພ່ງ, ພາຍໃຕ້ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທໍາ ແຫ່ງ ສປປ ລາວ, ປີ 2014.